ການປູກໝາກບວບລ່ຽມ

ໂດຍ: ແສດມະນີ ພົມພັກດີ, ສູນຂໍ້ມູນຂ່າວສານ

ການຕຽມດິນ

ໝາກບວບລ່ຽມເປັນຜັກທີ່ມີລະບົບຮາກເລິກປານກາງຄວນຂຸດໄຖດິນເລິກປະມານ 20-25 ຊັງຕີແມັດຕາກດິນໄວ້ປະມານ 5-7 ມື້ໃສ່ຝຸ່ນຄອກຫຼືຝຸ່ນໝັກທີ່ລະລາຍຕົວດີແລ້ວຄົນໃຫ້ເຂົ້າກັນກັບດິນໂດຍສະເພາະດິນຊາຍແລະດິນໜຽວຕ້ອງໃສ່ໃຫ້ຫຼາຍເພື່ອປັບສະພາບຂອງດິນໃຫ້ດີຂຶ້ນ ແລະ ເພີ້ມຄວາມອຸດົມສົມບູນ. ຖ້າດິນເປັນກົດຄວນໃສ່ປູນຂາວປັບສະພາບຄວາມເປັນກົດເປັນດ່າງໃຫ້ຢູ່ໃນລະດັບທີ່ເໝາະສົມ , ພວນດິນໃຫ້ລະອຽດເພື່ອຕຽມພ້ອມທີ່ຈະປູກໄດ້.

ການປູກ

ໄລຍະທີ່ເໝາະສົມຄືໄລຍະຫວ່າງຕົ້ນ 75 ຊັງຕີແມັດ ໄລຍະຫວ່າງແຖວ 100 ຊັງຕີແມັດ.ການປູກແມ່ນໃຫ້ຢອດແກ່ນພັນລົງຂຸມ ຂຸມລະ 4-5 ເມັດ ຝັງໃຫ້ເລິກລົງໃນດິນປະມານ 2-4 ຊັງຕີແມັດ ຈາກນັ້ນຖົມແກ່ນດ້ວຍດິນຜຸ່ຍໆ ຫຼື ຝຸ່ນ ຄອກໜາປະມານ 1 ຊັງຕີແມັດ ຫົດນ້ຳໃຫ້ຊຸ່ມຢ່າງສະໝ່ຳສະເໝີທຸກມື້. ເມື່ອຕົ້ນງອກຂຶ້ນອາຍຸໄດ້ ປະມານ 10-15 ມື້ ຫຼື ມີໃບແທ້ 2-4 ໃບ ໃຫ້ແຍກຕົ້ນທີ່ອ່ອນແອ ຫຼື ບໍ່ ສົມບູນຖິ້ມໃຫ້ເຫຼືອໄວ້ປະມານ3-4 ຂຸມ

ການເຮັດຄ້າງ

ເມື່ອຕົ້ນໝາກບວບອາຍຸ ໄດ້ 15-20 ມື້ ຄວນເຮັດຄ້າງ ຫຼື ຮ້ານເພື່ອໃຫ້ເຄືອໝາກບວບທາວຂຶ້ນໄປເກາະ . ການປູກ ແບບໃຫ້ເຄືອໝາກບວບທາວໄປຕາມພື້ນດິນໂດຍບໍເຮັດຄ້າງ ຫຼື ຮ້ານຈະເຮັດໃຫ້ໝາກບວບງໍໂຄ້ງມີຮູບຮ່າງທີ່ບໍ່ງາມບໍ່ ເປັນທີ່ນິຍົມຂອງຜູ້ຊື້ . ການເຮັດຄ້າງ ຫຼື ຮ້ານໃຫ້ໝາກບວບມີ 2 ແບບຄື:

1) ປັກໄມ້ຄ້າງຍາວ 2-3 ແມັດ ທຸກຂຸມແລ້ວໂຄ້ງປາຍເຂົ້າຫາກັນມັດຕິດກັນໄວ້ແລ້ວໃຊ້ໄມ້ຄ້າງພາດຂວາງປະມານ 2-3 ຊ່ອງ ທຸກໆໄລຍະ 40-50 ຊັງຕີແມັດ.

2) ເຮັດເປັນຮ້ານໂດຍໃຊ້ໄມ້ຄ້າງຜູກເປັນຮ້ານສູງປະມານ 1-2 ແມັດ ຫຼື ສູງພໍສົມຄວນທີ່ສະດວກໃນການເຮັດ.

ນອກຈາກນີ້ຍັງໃຊ້ຄ້າງແບບທຳມະຊາດທີ່ມີຢູ່ແລ້ວເຊັ່ນ:ໄມ້ຟຸ່ມນ້ອຍໆ, ຮົ້ວບ້ານ ແລະ ອື່ນໆເຊິ່ງເໝາະສຳລັບການປູກແບບສວນຄົວ.

ການບົວລະບັດຮັກສາ

ການໃຫ້ນ້ຳ: ຄວນໃຫ້ນ້ຳຢ່າງສະໝ່ຳສະເໝີ ແລະ ພຽງພໍ . ບໍ່ຄວນໃຫ້ເຄືອໝາກບວບຂາດນ້ຳໃນໄລຍະອອກດອກ ແລະ ເປັນໝາກເພາະຈະເຮັດໃຫ້ດອກຫລົ່ນ ແລະ ໝາກບໍ່ຕິດລະບົບການໃຫ້ນ້ຳແບບປ່ອຍຕາມຮ່ອງຈະໃຫ້ຜົນດີ ແລະ ຫຼີກລ້ຽງການໃຫ້ນ້ຳແບບພົ່ນຝອຍເພາະຈະເຮັດໃຫ້ເກີດບັນຫາເຊື້ອໂຣກຫາງໃບ.

ການໃສ່ປຸ່ຍ: ໝາກບວບລ່ຽມເປັນພືດກິນໝາກຄວນໃຫ້ປຸ່ຍທີ່ມີສັດສ່ວນຂອງທາດໄນໂຕຣເຈນ 1 ສ່ວນຟົດສະຟັດ ½ - 2 ສ່ວນ ເຊັ່ນ : ປຸ່ຍສູດ 13-13-21 ຫຼື ສູດ ອື່ນໆທີ່ໃກ້ຄຽງກັນໃນອັດຕາ 30-50 ກີ ໂລ/ ໄລ່ ແລະ ຄວນໃຫ້ປຸ່ຍໃນໂຕເຈນ ເຊັ່ນ : ປຸ່ຍຢູເຣຍ ຫຼື ແອນໂມເນຍໄນເຕສ ປະມານ 3-5 ກີ ໂລ/ໄລ່ ເພື່ອຊ່ວຍເລັ່ງການຈະເລີນເຕີບໂຕໃນຊ່ວງທຳອິດແຕ່ຕ້ອງລະມັດລະວັງບໍ່ຄວນໃຫ້ປຸ່ຍໃນໂຕເຈນຫຼາຍເກີນໄປເພາະຈະເຮັດໃຫ້ເກີດອາກາເຝືອໃບ.

ການໃສ່ຄວນແບ່ງເປັນສອງຄັ້ງຄື: ໃສ່ຄັ້ງທຳອິດໃນຕອນປູກແບບຮອງພື້ນແລ້ວພວນດິນຖົມ ແລະ ໃສ່ຄັ້ງທີສອງເມື່ອເຄືອໝາກບວບມີອາຍຸ ປະມານ 20-30 ມື້ ໂດຍໃສ່ແບບໂຮຍອ້ອມຂ້າງແລ້ວພວນດິນຖົມ . ການໃສ່ປຸ່ຍໄນໂຕເຈນຄວນໃສ່ພຽງຄັ້ງດຽວແບບໂຮຍອ້ອມຂ້າງເມື່ອເຄືອໝາກບວບມີອາຍຸ ປະມານ 7-10 ມື້.

ການເກັບກ່ຽວ

ອາຍຸການເກັບກ່ຽວຂອງໝາກບວບລ່ຽມແມ່ນ ປະມານ 45-60 ມື້ ຫຼັງຈາກປີ່ງຍອດທຳອິດ. ຄວນເກັບເອົາໝາກທີ່ ຍັງອ່ອນເພາະເນື້ອຈະອ່ອນນຸ້ມໄດ້ຂະໜາດພໍດີງາມ ເຊິ່ງໝາກຈະມີຂະໜາດຍາວ ປະມານ 15-20 ຊັງຕີແມັດ ຄວນເກັບກ່ອນທີ່ໝາກຈະແກ່ບໍ່ຄວນປະໃຫ້ໝາກແກ່ຄາຕົ້ນເພາະຈະເຮັດໃຫ້ຜົນຜະລິດຕ່ຳລົງ.